ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 378 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 23 MAY 2014

# ຂໍ້ຕົກລົງ

## ວ່າດ້ວຍຄ່າທຳນຽມ, ຄ່າບໍລິການໃນການຂໍອະນຸຍາດດຳເນີນທຸລະກິດ ແລະ ຄ່າຄຸ້ມຄອງປະຈຳປີ ຂອງສະຖາບັນການເງິນ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;
- ອີງຕາມ ດຳລັດວ່າດ້ວຍທຸລະກິດໃຫ້ເຊົ່າສິນເຊື່ອ ສະບັບເລກທີ 11/ນຍ, ລົງວັນທີ 18 ກຸມພາ 1999;
- ອີງຕາມ ດຳລັດວ່າດ້ວຍໂຮງຊວດຈຳ ສະບັບເລກທີ 10/ນຍ, ລົງວັນທີ 2 ກຸມພາ 2002;

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບ ຄ່າທຳນຽມຍື່ນເອກະສານຂໍອະນຸຍາດດຳເນີນທຸລະກິດ, ຄ່າບໍລິການຄົ້ນຄ້ວາອອກອະນຸຍາດດຳເນີນທຸລະກິດ ແລະ ຄ່າຄຸ້ມຄອງປະຈຳປີຂອງສະຖາບັນການເງິນທີ່ຂໍອະນຸຍາດດຳເນີນທຸລະກິດຢູ່ ສປປ ລາວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ເປັນເອກະພາບໃນທົ່ວລະບົບສະຖາບັນການເງິນ.

**ມາດຕາ 2 ຄ່າທຳນຽມຍື່ນເອກະສານຂໍອະນຸຍາດດຳເນີນທຸລະກິດ**

ຜູ້ຂໍອະນຸຍາດດຳເນີນທຸລະກິດຕ້ອງເສຍຄ່າທຳນຽມຍື່ນເອກະສານຂໍອະນຸຍາດດຳເນີນທຸລະກິດ ແລະ ຂະຫຍາຍສາຂາ ຫຼື ໜ່ວຍບໍລິການ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ດັ່ງນີ້:

1. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສຳນັກງານໃຫຍ່ ຈຳນວນ 3.000.000 ກີບ;
   - ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສາຂາ ຈຳນວນ 1.000.000 ກີບ;
2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສຳນັກງານໃຫຍ່ ຈຳນວນ 500.000 ກີບ;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

3. **ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈຳນວນ 100.000 ກີບ;**
4. ບໍລິສັດ ໃຫ້ເຊົ່າສິນເຊື່ອ ສຳນັກງານໃຫຍ່ ຈຳນວນ 5.000.000 ກີບ;
   - ບໍລິສັດໃຫ້ເຊົ່າສິນເຊື່ອ ສາຂາ ຫຼື ໜ່ວຍບໍລິການ ຈຳນວນ 1.000.000 ກີບ;
5. ໂຮງຊວດຈຳ ສຳນັກງານໃຫຍ່ ຈຳນວນ 500.000 ກີບ;
6. ໂຄງການ ການເງິນຈຸລະພາກ ຈຳນວນ 200.000 ກີບ;

**ມາດຕາ 3 ຄ່າບໍລິການຄົ້ນຄ້ວາອອກອະນຸຍາດດຳເນີນທຸລະກິດ**

ຜູ້ຂໍອະນຸຍາດດຳເນີນທຸລະກິດ ຕ້ອງເສຍຄ່າບໍລິການຄົ້ນຄ້ວາອອກອະນຸຍາດດຳເນີນທຸລະກິດ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ພາຍຫຼັງທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຊົ່ວຄາວ ຊຶ່ງມີລາຍລະອຽດດັ່ງນີ້:

1. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ມີທຶນຈົດທະບຽນ 3 ຕື້ກີບ ຈຳນວນ 30.000.000 ກີບ;
   - ສາຂາຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ມີທຶນຈົດທະບຽນ 1 ຕື້ກີບ ຈຳນວນ 10 ລ້ານກີບ;
2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ມີທຶນຈົດທະບຽນ 200 ລ້ານກີບ ຈຳນວນ 2.000.000 ກີບ;
3. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີທຶນຈົດທະບຽນ 100 ລ້ານກີບ ຈຳນວນ 1.000.000 ກີບ;
4. ບໍລິສັດ ໃຫ້ເຊົ່າສິນເຊື່ອ ທີ່ມີທຶນຈົດທະບຽນ 5 ຕື້ກີບ ຈຳນວນ 50.000.000 ກີບ;
   - ສາຂາ ບໍລິສັດ ໃຫ້ບໍລິການເຊົ່າສິນເຊື່ອ ທີ່ມີທຶນຈົດທະບຽນ 1 ຕື້ກີບ ຈຳນວນ 10 ລ້ານກີບ;
5. ໂຮງຊວດຈຳ ທີ່ມີທຶນຈົດທະບຽນ 500 ລ້ານກີບ ຈຳນວນ 5.000.000 ກີບ;
6. ໂຄງການ ການເງິນຈຸລະພາກ ຈຳນວນ 2.000.000 ກີບ.

ການຄິດໄລ່ຄ່າບໍລິການຄົ້ນຄ້ວາອອກອະນຸຍາດດຳເນີນທຸລະກິດແມ່ນເທົ່າກັບ 1% ຂອງທຶນຈົດທະບຽນຂອງແຕ່ລະຮູບແບບ.

**ມາດຕາ 4 ຄ່າຄຸ້ມຄອງປະຈຳປີ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ບໍລິສັດໃຫ້ເຊົ່າສິນເຊື່ອ, ໂຮງຊວດຈຳ ລວມທັງສາຂາຂອງສະຖາບັນດັ່ງກ່າວ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ໂຄງການ ການເງິນຈຸລະພາກ ຕ້ອງເສຍຄ່າຄຸ້ມຄອງປະຈຳປີໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຈຳນວນ 0,05 % ຂອງຊັບສິນສະເລ່ຍ ຫຼື ຢ່າງໜ້ອຍ 0,5 % ຂອງທຶນຈົດທະບຽນ.

**ມາດຕາ 5 ການຊຳລະຄ່າຍື່ນເອກະສານ, ຄ່າຄົ້ນຄ້ວາອະນຸຍາດດຳເນີນທຸລະກິດ ແລະ ຄ່າຄຸ້ມຄອງປະຈຳປີ**

1. ຜູ້ຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນຕ້ອງຊຳລະຄ່າຍື່ນເອກະສານໃນເວລາຍື່ນສຳນວນຄຳຮ້ອງຕໍ່ທະນາຄານແຫ່ງ ສປປ ລາວ ແລະ ຄ່າຍື່ນເອກະສານດັ່ງກ່າວບໍ່ສາມາດຖອນຄືນໄດ້. ສ່ວນຄ່າຄົ້ນຄ້ວາອອກອະນຸຍາດດຳເນີນທຸລະກິດຕ້ອງຊຳລະໃນວັນໄດ້ຮັບໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ;

2. ສະຖາບັນການເງິນຕ້ອງຊໍາລະຄ່າຄຸ້ມຄອງ ປະຈໍາປີ ກ່ອນວັນທີ 31 ມັງກອນ ຂອງປີການບັນຊີໃໝ່.

**ມາດຕາ 6 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ, ກົມບໍລິການທະນາຄານ, ສາຂາ ທະນາຄານແຫ່ງ ສປປ ລາວ ແລະ ບັນດາສະຖາບັນການເງິນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ

ຜູ້ວ່າການ

ດຣ. ສົມພາວ ໄພສິດ